ສະຖາບັນແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ມອບໃບຍັ້ງຍືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2020 ໃຫ້ ສອງກົມກອງ




ໃນວັນທີ 16 ສິງຫາ 2021 ຜ່ານມາ ທະນາຄານແຫ່ງ ສປປລາວ (ທຫລ) ໄດ້ມີພິທີມອບໃບຍັ້ງຍືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜນ ຂຶ້ນ ຢູ່ທີ່ສຳນັກງານ ທຫລ, ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມຂອງ ສະຫາຍ ນ ວັດທະນາ ດາລາລອຍ ກຳມະການປະຈຳພັກ, ຮອງຜູ້ວ່າການ ທຫລ ພ້ອມນີ້, ກໍ່ມີຫົວໜ້າກົມ, ຮອງກົມ, ຄະນະພະແນກ ແລະ ສະມາຊິກພັກເຂົ້າຮ່ວມ.

ພິທີມອບໃບຍັ້ງຍືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜນ ໃຫ້ແກ່ສອງກົມກອງເທື່ອນີ້ ກໍ່ແມ່ນກົມກວດກາພາຍໃນ ແລະ ກົມຮ່ວມມືສາກົນ ເພື່ອເປັນການເຊີດຊູຜົນສຳເລັດທີ່ທັງສອງກົມກອງສາມາດຍາດມາໄດ້ຜົນງານ ແລະ ຜົນສຳເລັດໃນຫຼາຍດ້ານ ຊຶ່ງນັ້ນກໍ່ຍ້ອນ 2 ໜ່ວຍພັກພວກດັ່ງກ່າວ ມີຄວາມເຊື່ອໝັ້ນຕໍ່ການຊີ້ນຳ-ນຳພາວຽກງານຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ ເປັນຢ່າງດີ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ ແລະ ມີແບບແຜນວິທີເຮັດວຽກທີ່ເປັນລະບົບ ໂດຍຖືເອົາການປະຕິບັດຕາມຫຼັກການລວມສູນປະຊາທິປະທິປະໄຕ ເປັນບັນຫາສຳຄັນຕົ້ນຕໍ ເພື່ອມາຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງ ແລະ ບັນລຸຕາມແຜນການທີ່ວາງໄວ້ ພ້ອມນັ້ນ, ບັນດາສະມາຊິກພັກກໍ່ຄວາມເຂັ້ມແຂງທາງດ້ານປະລິມານ ແລະ ຄຸນນະພາບ.

 

ສະຫາຍ ນ ວັດທະນາ ດາລາລອຍ ກຳມະການປະຈຳພັກ, ຮອງຜູ້ອຳນວຍການ ທຫລ ກໍ່ໄດ້ຕີລາຄາສູງຕໍ່ຜົນງານທີ່ຍາດມາໄດ້ຂອງ 2 ກົມກອງ ເຊິ່ງທ່ານໄດ້ໃຫ້ທັດສະນະວ່າ: ປັດໄຈທີ່ເປັນພື້ນຖານສຳຄັນຕົ້ນຕໍ ທີ່ເຮັດໃຫ້ໜ່ວຍພັກພວກສະຫາຍສາມາດຍາດໄດ້ຜົນງານ ແລະ ຜົນສຳເລັດໃນຫຼາຍດ້ານນັ້ນ, ກໍ່ຍ້ອນໜ່ວຍພັກພວກສະຫາຍ ມີຄວາມເຊື່ອໝັ້ນຕໍ່ການຊີ້ນຳ-ນຳພາວຽກງານຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ, ມີແບບແຜນວິທີເຮັດວຽກທີ່ເປັນລະບົບ, ມີການຊີ້ນຳ-ນຳພາທີ່ຖືກຕ້ອງສອດຄ່ອງຕາມລະບຽບ-ຫຼັກການຂອງພັກ ແລະ ຖືເອົາການປະຕິບັດຕາມຫຼັກການລວມສູນປະຊາທິປະທິປະໄຕ ເປັນບັນຫາສຳຄັນຕົ້ນຕໍ, ນຳມາຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງ ບັນລຸຕາມແຜນການທີ່ວາງໄວ້ ແລະ ສະມາຊິກພັກມີຄວາມເຂັ້ມແຂງທາງດ້ານປະລິມານ ແລະ ຄຸນນະພາບເປັນກົກ ເຮັດໃຫ້ໜ່ວຍພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນທຸກການເຄື່ອນໄຫວວຽກງານ ພ້ອມກັນນັ້ນ, ພວກສະຫາຍຍັງໄດ້ຖືສຳຄັນຕໍ່ວຽກງານການປັບປຸງກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ.

*# ພາບ-ຂ່າວ: ສົມອົກ ເຄນຄຳແພງ*

 







*ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນລາວ*